*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, 03F, 332-340*
https://doi.org/10.69692/SUJMRD1203F332

# The Guidelines for Academic Affairs Administration of Buddhist Secondary Schools in Luang Prabang Province

**Monk No SITTHIPHONE[1*], Saysamone PRASONEXAY[2], Sengsavanh PHONESANITH[3]**

*Faculty of Education, National University of Laos, Lao PDR*

***Correspondence:***
Monk No SITTHIPHONE, *Faculty of Education, National University of Laos*
Email:
nositthiphone04101@gmail.com

***Article Info:***
***Submitted: August 02, 2026***
***Revised: August 15, 2026***
***Accepted: August 20, 2026***

**Abstract**

The objectives of this research were to: 1) investigate the current status of academic administration in Buddhist secondary schools in Luang Prabang Province, 2) to create the guidelines for academic administration in Buddhist secondary schools in Luang Prabang Province, and 3)evaluate these guidelines for academic administration in Buddhist secondary schools in Luang Prabang Province. The research methodology was divided into three phases. The target group for Phase 1 consisted of 59 school administrators and teachers. The target group for Phase 2 comprised 9 key informants, namely: the President, Vice President, and Head of Office of the Lao Buddhist Fellowship Organization (LBFO); school directors and deputy directors; and the Head of the Sangha Affairs Sector. For Phase 3, the stakeholders involved in evaluating the guidelines consisted of 15 school directors, academic staff, and teachers. The research instruments used were questionnaires, structured interviews, and guideline evaluation forms. Data were analyzed using statistical measures including frequency (f), percentage (%), mean ($\mu$), and standard deviation ($\sigma$).

The research findings revealed that the overall status of academic administration in Buddhist secondary schools in Luang Prabang Province was at a high level. When ranked by mean from highest to lowest, the areas were: curriculum development, learning process development, measurement and evaluation, and innovative media development, respectively; There were 22 proposed guidelines for academic administration in Buddhist secondary schools in Luang Prabang Province, including: 7 guidelines for curriculum development, 5 guidelines for learning process development, 6 guidelines for measurement and evaluation, and 4 guidelines for innovative media development; The overall evaluation of the guidelines for academic administration in Buddhist secondary schools in Luang Prabang Province showed that both suitability (propriety) and feasibility were at a high level. When considered individually, each guideline was rated at high to highest levels for both suitability and feasibility.

**Keywords:** *Academic Affairs Administration; Management Guidelines; Buddhist Secondary School*

## 1. ພາກສະເໜີ

ໃນຍຸກທີ່ໂລກມີການປ່ຽນແປງຢ່າງວ່ອງໄວ, ການສຶກສາເປັນກົນໄກສຳຄັນໃນການພັດທະນາຄົນໃຫ້ມີຄວາມຮູ້, ທັກສະ ແລະ ສາມາດປັບຕົວຕໍ່ການປ່ຽນແປງໄດ້. ດັ່ງນັ້ນ, ການບໍລິຫານວຽກງານວິຊາການຈຶ່ງມີບົດບາດສຳຄັນໃນການຍົກລະດັບຄຸນນະພາບການຮຽນການສອນ, ພັດທະນາຫຼັກສູດ, ຄູອາຈານ, ລະບົບປະກັນຄຸນນະພາບ ແລະ ການນຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບ ເພື່ອສ້າງນັກຮຽນທີ່ມີຄຸນນະພາບ, ພ້ອມພັດທະນາປະເທດ ແລະ ຍົກມາດຕະຖານການສຶກສາໃຫ້ທຽບເທົ່າສາກົນ (Office of the National Education Council, 2017).

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/*

ການສຶກສາໃນ ສປປ ລາວ ເປັນຂະບວນການພັດທະນາຄວາມຮູ້, ທັກສະ, ຄຸນນະທຳ ແລະ ຄຸນນະພາບຊີວິດຂອງຜູ້ຮຽນ ເພື່ອສ້າງຊັບພະຍາກອນມະນຸດທີ່ມີຄຸນນະພາບ ແລະ ສະໜອງການພັດທະນາສັງຄົມ ແລະ ເສດຖະກິດຂອງປະເທດ. ການສຶກສາຍຶດໝັ້ນ 3 ລັກສະນະພື້ນຖານ ຄື: ລັກສະນະຊາດ, ລັກສະນະວິທະຍາສາດທັນສະໄໝ ແລະ ລັກສະນະມະຫາຊົນ ເພື່ອສ້າງພົນລະເມືອງທີ່ມີຄວາມຮູ້ ຄຸນນະທຳ ແລະ ສາມາດຮ່ວມພັດທະນາປະເທດໄດ້ຢ່າງຍືນຍົງ (Ministry of Education and Sports, 2013).

ສົກຮຽນ 2024–2025 ເປັນສົກຮຽນສຸດທ້າຍຂອງການດຳເນີນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021–2025) ໂດຍລັດຖະບານຍັງຖືວ່າການພັດທະນາການສຶກສາເປັນປັດໄຈສຳຄັນໃນການສ້າງຊັບພະຍາກອນມະນຸດທີ່ມີຄຸນນະພາບ. ຈຸດເນັ້ນສຳຄັນຄື ການຍົກລະດັບຄຸນນະພາບການສຶກສາຂັ້ນພື້ນຖານ, ສົ່ງເສີມໂອກາດໃນການເຂົ້າຮຽນ ແລະ ຫຼຸດຜ່ອນການປະລະການຮຽນ, ພ້ອມທັງພັດທະນາຫຼັກສູດ, ສ້າງກຳລັງແຮງງານທີ່ມີຄຸນນະພາບ, ເພີ່ມການລົງທຶນດ້ານການສຶກສາ ແລະ ເສີມສ້າງປະສິດທິພາບການບໍລິຫານ ແລະ ການນຳໃຊ້ຊັບພະຍາກອນໃຫ້ເກີດຜົນສູງສຸດ (Ministry of Education and Sports, 2024, pp. 8-9).

ການພັດທະນາການບໍລິຫານວຽກງານວິຊາການມີຄວາມສຳຄັນຫຼາຍໃນການສຶກສາເພື່ອຊ່ວຍປັບປຸງຄຸນນະພາບຂອງລະບົບການສຶກສາ ແລະ ການສິດສອນ ເຊິ່ງມັນກ່ຽວໂດຍກົງກັບການພັດທະນາຄວາມຮູ້, ຄວາມສາມາດ ແລະ ວິທີການບໍລິຫານການສຶກສາ, ເພື່ອຕອບສະໜອງຄວາມຕ້ອງການທີ່ປ່ຽນແປງຂອງຍຸກປະຈຸບັນຢ່າງມີປະສິດທິຜົນ, ການສຶກສາເປັນຮາກຖານພື້ນຖານສຳລັບຄວາມກ້າວໜ້າຂອງປະເທດຊາດ ໂດຍຄູອາຈານມີບົດບາດສຳຄັນໃນການບັນລຸຈຸດປະສົງ ໂດຍສະເພາະຢູ່ໃນໂຮງຮຽນລະດັບສູງ ການຄຸ້ມຄອງວຽກງານວິຊາການຖືວ່າເປັນກະແຈທີ່ສຳຄັນ ໃນການຍົກສູງບົດບາດ ແລະ ຄວາມສາມາດຂອງນັກຮຽນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຍຸກໂລກາພິວັດ, ຄູ-ອາຈານ ບໍ່ພຽງແຕ່ມີຄວາມສາມາດໃນການສອນເທົ່ານັ້ນ ແຕ່ຍັງມີຄວາມສາມາດໃນການບໍລິຫານການຄຸ້ມຄອງຂະບວນການຮຽນຮູ້ (Sallis, 2018).

ການບໍລິຫານວຽກງານວິຊາການເປັນພາລະກິດຫຼັກຂອງສະຖານສຶກສາ ທີ່ເນັ້ນພັດທະນາຄຸນນະພາບການຮຽນ-ການສອນໃຫ້ບັນລຸຈຸດປະສົງຂອງຫຼັກສູດ ແລະ ການສຶກສາ ໂດຍຄວບຄຸມການກຳນົດນະໂຍບາຍ, ການວາງແຜນ, ການພັດທະນາ, ການນິເທດ, ການວັດຜົນ ແລະ ການປະເມີນຜົນ. ຂອບເຂດວຽກການບໍລິຫານວຽກງານວິຊາການປະກອບດ້ວຍ 12 ດ້ານ ຄື: ການພັດທະນາຫຼັກສູດ, ຂະບວນການຮຽນຮູ້, ການວັດ ແລະ ປະເມີນຜົນ, ການວິໄຈ, ສື່ ແລະ ເຕັກໂນໂລຊີ, ແຫຼ່ງຮຽນຮູ້, ການນິເທດ, ການແນະແນວ, ລະບົບປະກັນຄຸນນະພາບ, ການບໍລິການວິຊາການແກ່ຊຸມຊົນ, ການປະສານຄວາມຮ່ວມມື ແລະ ການສົ່ງເສີມວຽກງານວິຊາການ ເພື່ອຍົກລະດັບຄຸນນະພາບການຈັດການສຶກສາຢ່າງຮອບດ້ານ (Ministry of Education, 2003, pp. 33-38). ຊຶ່ງຈາກຜົນການສຶກສາເບື້ອງຕົ້ນພົບວ່າ ການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສົງ ແຂວງຫຼວງພະບາງ ຍັງປະສົບບັນຫາດ້ານບຸກຄະລາກອນ, ການພັດທະນາຄູ, ການວາງແຜນວິຊາການ ແລະ ການຂາດແຄນສື່, ອຸປະກອນ ແລະ ງົບປະມານ ສົ່ງຜົນໃຫ້ການຮຽນ-ການສອນຍັງບໍ່ທັນສະໄໝ ແລະ ກະທົບຕໍ່ຄຸນນະພາບຜູ້ຮຽນ. ດັ່ງນັ້ນ ການພັດທະນາການບໍລິຫານວຽກງານວິຊາການຈຶ່ງເປັນສິ່ງຈຳເປັນເພື່ອຍົກລະດັບຄຸນນະພາບການສຶກສາ.

ຈາກສະພາບ ແລະ ບັນຫາດັ່ງກ່າວ ຜູ້ຄົ້ນຄວ້າໃນຖານະທີ່ເປັນບຸກຄະລາກອນຄູຢູ່ໂຮງຮຽນມັດທະຍົມສຶກສາສົງ ແຂວງຫຼວງພະບາງ, ຈຶ່ງມີຄວາມສົນໃຈສຶກສາ "ແນວທາງການບໍລິຫານວຽກງານວິຊາການໂຮງຮຽນມັດທະຍົມສຶກສາສົງ ແຂວງຫຼວງພະບາງ", ຊຶ່ງຜົນການສຶກສາຄົ້ນຄວ້າຈະໄດ້ຂໍ້ມູນສຳຄັນທີ່ເປັນປະໂຫຍດໃຫ້ແກ່ຜູ້ບໍລິຫານ ແລະ ຄູສອນ ເພື່ອນຳໄປເປັນແນວທາງການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສົງ ແຂວງຫຼວງພະບາງ ໃຫ້ມີປະສິດທິພາບ ແລະ ປະສົບຜົນສຳເລັດຕາມເປົ້າໝາຍຫຼາຍຂຶ້ນໃນຕໍ່ໜ້າ ແລະ ມີຈຸດປະສົງ ເພື່ອສຶກສາສະພາບການບໍລິຫານວຽກງານວິຊາການ, ສຶກສາແນວທາງການບໍລິຫານວຽກງານວິຊາການ ແລະ ປະເມີນແນວທາງການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສົງ ແຂວງຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

ການຄົ້ນຄວ້າຄັ້ງນີ້ ເປັນການສຶກສາແນວທາງການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສົງ ແຂວງຫຼວງພະບາງ ໂດຍສຶກສາ ໃນ 4 ດ້ານຄື: 1) ການພັດທະນາຫຼັກສູດ, 2) ການພັດທະນາຂະບວນການຮຽນຮູ້, 3) ການວັດ ແລະ ປະເມີນຜົນ ແລະ 4) ການພັດທະນາສື່ນະວັດຕະກຳ. ຊຶ່ງໄດ້ນຳໃຊ້ວິທີການຄົ້ນຄວ້າແບບປະສົມ (Mixed Methodology Research).

### 2.1 ກຸ່ມເປົ້າໝາຍຜູ້ໃຫ້ຂໍ້ມູນໃນການຄົ້ນຄວ້າ

ໄລຍະທີ 1: ສຶກສາສະພາບການບໍລິຫານວຽກງານວິຊາການ ເຊິ່ງກຸ່ມເປົ້າໝາຍປະກອບມີ: ຜູ້ບໍລິຫານໂຮງຮຽນ ແລະ ຄູສອນ ທີໂຮງຮຽນວັດພູຄວາຍ ແລະ ໂຮງຮຽນວັດປ່າຜາໂອ ນະຄອນຫຼວງພະບາງ, ໃນນັ້ນມີຜູ້ບໍລິຫານມີຈຳນວນ 06 ທ່ານ, ວິຊາການ ຈຳນວນ 04 ທ່ານ, ຄູສອນຈຳນວນ 49 ທ່ານ ລວມຈຳນວນທັງໝົດ 59 ທ່ານ ໂດຍເລືອກມາແບບເຈາະຈົງ (Purposive sampling).

ໄລຍະທີ 2: ການສຶກສາແນວທາງການບໍລິຫານວຽກງານວິຊາການ ໂດຍການສຳພາດຜູ້ຊົງຄຸນວຸດທິຈຳນວນ 9 ທ່ານ ທີ່ເປັນປະທານ ອພສ ແຂວງ, ຮອງປະທານ ອພສ ແຂວງ, ພະແນກສຶກສາສົງນະຄອນຫຼວງພະບາງ, ຫົວໜ້າຫ້ອງການ, ຄະນະຫ້ອງການສຶກສາສົງນະຄອນຫຼວງພະບາງ, ຜູ້ບໍລິຫານໂຮງຮຽນມັດທະຍົມສົມບູນສຶກສາສົງວັດພູຄວາຍ ແລະ ວັດປ່າຜາໂອ ເມືອງຫຼວງພະບາງ ນະຄອນຫຼວງພະບາງ.

ໄລຍະທີ 3: ການປະເມີນແນວທາງການບໍລິຫານວຽກງານວິຊາການ ເປັນກຸ່ມຜູ້ມີສ່ວນກ່ຽວຂ້ອງໃນການບໍລິຫານວຽກງານວິຊາການຂອງໂຮງຮຽນ ແມ່ນຄະນະອຳນວຍການ, ຫົວໜ້າໜ່ວຍງານວິຊາການ ແລະ ຕົວແທນຂອງຄູສອນໃນໂຮງຮຽນມັດທະຍົມສຶກສາສົງ ແຂວງ

ຫຼວງພະບາງ ລວມຈຳນວນ 15 ທ່ານ ໂດຍເລືອກມາແບບເຈາະຈົງ (Purposive sampling).

**2.2 ເຄື່ອງມື ແລະ ການຫາຄຸນນະພາບຂອງເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ**

1. ແບບສອບຖາມ ເຊິ່ງປະກອບດ້ວຍ 2 ພາກສ່ວນຄື ແບບສອບຖາມກ່ຽວກັບຂໍ້ມູນສ່ວນຕົວ ສ້າງໃນຮູບແບບ (Checklist) ແລະ ແບບສອບຖາມກ່ຽກັບສະພາບການບໍລິຫານວຽກງານວິຊາການ ເປັນລັກສະນະມາດຕາສ່ວນປະມານຄ່າ 5 ລະດັບ (Rating Scale) ອ້າງໃນ (Srisa-ard, 2011, p. 121)

2. ແບບສຳພາດແນວທາງການບໍລິຫານວຽກງານວິຊາການ ໂດຍໃຊ້ແບບສຳພາດແບບມີໂຄງສ້າງ (Structured interview).

3. ແບບປະເມີນແນວທາງ ໂດຍການປະຍຸກໃຊ້ຕາມທິດສະດີຂອງ (Stufflebeam, 2001), ຊຶ່ງປະເມີນແນວທາງ ໃນ 2 ມາດຕະຖານ ຄື: 1) ດ້ານຄວາມເໝາະສົມ ແລະ 2) ດ້ານຄວາມເປັນໄປໄດ້ ໂດຍແບບປະເມີນມີລັກສະນະເປັນແບບມາດຕາສ່ວນປະມານຄ່າ (Rating scale) 5 ລະດັບ.

ຜູ້ຄົ້ນຄວ້າໄດ້ຊອກຫາຄຸນນະພາບເຄື່ອງມື ໂດຍນຳເຄື່ອງມືທີ່ສ້າງຂຶ້ນທັງໝົດໄປຜ່ານຜູ້ຊ່ຽວຊານ 5 ທ່ານ ກວດສອບຄວາມຖືກຕ້ອງທາງດ້ານເນື້ອໃນ ເພື່ອໃຫ້ສອດຄ່ອງກັບຈຸດປະສົງຂອງການຄົ້ນຄວ້າ ແລະ ຄຳນວນຄ່າ IOC ໄດ້ຄ່າ (0.80–1.00) ຈາກນັ້ນນຳເຄື່ອງມືໄປທົດລອງໃຊ້ກັບກຸ່ມຕົວຢ່າງ 30 ຄົນ ເພື່ອກວດສອບຄ່າຄວາມເຊື່ອໝັ້ນດ້ວຍ Cronbach's Alpha (Cronbach, 1990, pp. 202-204) ໄດ້ຄ່າເທົ່າກັບ 0.968 ແລະ ເຫັນວ່າຊຸດເຄື່ອງມືດັ່ງກ່າວມີຄວາມຖືກຕ້ອງ ແລະ ເໝາະສົມ ຈາກນັ້ນຜູ້ຄົ້ນຄວ້າຈັດພິມເປັນສະບັບສົມບູນເພື່ອລົງເກັບກຳຂໍ້ມູນ

**2.3 ວິທີເກັບກຳຂໍ້ມູນ**

ຜູ້ຄົ້ນຄວ້າໄດ້ດຳເນີນການເກັບຮອບຮວມຂໍ້ມູນ ໂດຍຂໍໜັງສືສະເໜີຈາກຫົວໜ້າຄະນະວິຊາຄະນະສຶກສາສາດເພື່ອຂໍອະນຸຍາດເກັບຂໍ້ມູນ, ປະສານງານ ແລະ ນັດໝາຍກັບກຸ່ມເປົ້າໝາຍ, ດຳເນີນການເກັບຂໍ້ມູນດ້ວຍຕົນເອງ ພ້ອມຊີ້ແຈງວິທີການຕອບເຄື່ອງມືການຄົ້ນຄວ້າ ແລະ ນຳຂໍ້ມູນທີ່ໄດ້ໄປວິເຄາະຕາມຈຸດປະສົງຂອງການຄົ້ນຄວ້າ ໂດຍໃຊ້ແບບສອບຖາມ ຈຳນວນ 15 ສະບັບ, ແບບສຳພາດແບບມີໂຄງສ້າງ ຈຳນວນ 9 ສະບັບ ແລະ ແບບປະເມີນແນວທາງ 15 ສະບັບ.

**2.4 ວິທີການວິເຄາະຂໍ້ມູນ**

1) ວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ຜູ້ສຶກສາວິເຄາະຂໍ້ມູນດ້ວຍໂປຣແກຣມສຳເລັດຮູບທາງສະຖິຕິ (SPSS) ເພື່ອປະມວນຜົນຄ່າສະຖິຕິພັນລະນາ (Descriptive statistics) ເຊັ່ນ: ຄວາມຖີ່ (Frequency), ຄ່າສ່ວນຮ້ອຍ (Percentage) 2) ວິເຄາະສະພາບການບໍລິຫານວຽກງານວິຊາການ 4 ດ້ານ ດ້ວຍໂປຣແກຣມສຳເລັດຮູບທາງສະຖິຕິ (SPSS) ເພື່ອຫາຄ່າ ຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (Standard Deviation) ແລະ ຕີຄວາມໝາຍຂອງຂໍ້ມູນຕາມເກນທີກຳນົດໄວ້ດັ່ງນີ້:

ຄະແນນສະເລ່ຍ: 4.51-5.00 ການບໍລິຫານວຽກງານວິຊາການຫຼາຍທີ່ສຸດ

ຄະແນນສະເລ່ຍ: 3.51-4.50 ການບໍລິຫານວຽກງານວິຊາການຫຼາຍ

ຄະແນນສະເລ່ຍ: 2.51-3.50 ການບໍລິຫານວຽກງານວິຊາການປານກາງ

ຄະແນນສະເລ່ຍ: 1.51-2.50 ການບໍລິຫານວຽກງານວິຊາການໜ້ອຍ

ຄະແນນສະເລ່ຍ: 1.00-1.50 ການບໍລິຫານວຽກງານວິຊາການໜ້ອຍທີ່ສຸດ (Srisa-ard, 2011)

3) ການວິເຄາະຂໍ້ມູນຈາກການສຳພາດເພື່ອສຶກສາແນວທາງ ແມ່ນໃຊ້ວິທີການສະຫຼຸບ, ສັງລວມ ແລະ ສັງເຄາະຈັດລຽງເນື້ອໃນແລ້ວພັນລະນາແບບລຽງຄວາມ ແລະ 4)ການວິເຄາະຂໍ້ມູນການປະເມີນແນວທາງ, ຜູ້ຄົ້ນຄວ້າໄດ້ວິເຄາະຂໍ້ມູນດ້ວຍໂປຣແກຣມສຳເລັດຮູບ ໂດຍກວດສອບຄວາມສົມບູນຂອງແບບປະເມີນ, ບັນທຶກຂໍ້ມູນ ແລະ ວິເຄາະຫາຄ່າສະເລ່ຍ (μ) ແລະ ຄ່າຜັນປ່ຽນມາດຕະຖານ (σ) ພ້ອມທັງຕີຄວາມໝາຍຂອງຂໍ້ມູນຕາມເກນການປະມານຄ່າ 5 ລະດັບ (Srisa-ard, 2011).

**3. ຜົນໄດ້ຮັບ**

**1. ຜົນການສຶກສາສະພາບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສົງ ແຂວງຫຼວງພະບາງ ມີດັ່ງນີ້:**

1.1 ຜົນການວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ:

ຜູ້ຕອບແບບສອບຖາມສ່ວນຫຼາຍມີວຸດທິການສຶກສາປະລິນຍາຕີຂຶ້ນໄປ ເທົ່າກັບ 69.5% ແລະ ຕ່ຳກວ່າປະລິນຍາຕີເທົ່າກັບ 30.5% ຕາມລຳດັບ; ມີປະສົບການເຮັດວຽກ 11 ປີຂຶ້ນໄປ ເທົ່າກັບ 67.8%, ຮອງລົງມາ 6-10 ປີລົງມາ ເທົ່າກັບ 32.2% ຕາມລຳດັບ.

1.2 ຜົນການວິເຄາະຂໍ້ມູນກ່ຽວກັບສະພາບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສົງ ແຂວງຫຼວງພະບາງ ດັ່ງນີ້:

ສະພາບການສະພາບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສົງ ແຂວງຫຼວງພະບາງ ໂດຍລວມຢູ່ໃນລະດັບຫຼາຍ (μ = 3.99, σ=0.49) ເມື່ອພິຈາລະນາແຕ່ລະດ້ານສະແດງໃຫ້ເຫັນດັ່ງນີ້:

1) ດ້ານການພັດທະນາຫຼັກສູດ ໂດຍລວມຢູ່ໃນລະດັບຫຼາຍ (μ = 4.15, σ=0.58). ເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າການບໍລິຫານວຽກງານວິຊາການຫຼາຍຂຶ້ນໄປແມ່ນ: ການພັດທະນາຫຼັກສູດເປັນເລື່ອງທີ່ສຳຄັນທີ່ໂຮງຮຽນຕ້ອງປະຕິບັດ (μ = 4.63, σ=0.67), ຮອງລົງມາແມ່ນໂຮງຮຽນໄດ້ວິເຄາະຂໍ້ມູນ, ຈຸດແຂງ, ຈຸດອ່ອນ, ໂອກາດ ແລະ ອຸປະສັກຂອງໂຮງຮຽນ (μ = 4.20, σ=0.71); ການພັດທະນາຫຼັກສູດ

ຕ້ອງມີຄວາມຮູ້, ຄວາມສາມາດຂອງບຸກຄະລາກອນທຸກພາກສ່ວນທີ່ກ່ຽວຂ້ອງ (μ = 4.20, σ=0.91) ແລະ ການບໍລິຫານວຽກງານວິຊາການດ້ານທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນການພັດທະນາຫຼັກສູດຂອງໂຮງຮຽນມາຈາກການກຳນົດປະສົບການ (μ = 4.02, σ=0.73); ການຈັດເນື້ອໃນຫຼັກສູດຊ່ວຍພັດທະນານັກຮຽນເປັນໄປຕາມອຸດົມການ, ເປົ້າໝາຍ (μ = 4.02, σ=0.73) ແລະ ການພັດທະນາຫຼັກສູດເພື່ອໃຫ້ຜູ້ຮຽນມີຄວາມສົມບູນທາງດ້ານປັນຍາ (μ = 4.02, σ=0.73) ຕາມລຳດັບ.

2) ດ້ານການພັດທະນາຂະບວນການຮຽນຮູ້ ໂດຍລວມຢູ່ໃນລະດັບຫຼາຍ (μ = 4.03, σ=0.47). ເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າຢູ່ໃນລະດັບຫຼາຍທຸກຂໍ້, ຊຶ່ງຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນໂຮງຮຽນສົ່ງເສີມໃຫ້ຄູຜູ້ສອນແຕ່ງບົດສອນຊອກຫາຄວາມຮູ້ໃໝ່ໆເພື່ອພັດທະນາການສຶກສາໃນໂຮງຮຽນ (μ = 4.32, σ=0.75), ຮອງລົງມາແມ່ນ ໂຮງຮຽນກຳນົດໃຫ້ຄູຜູ້ສອນຈັດຂະບວນການຮຽນຮູ້ທີ່ເນັ້ນເອົານັກຮຽນເປັນໃຈກາງ (μ = 4.19, σ=0.73 ແລະ ດ້ານທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນ ໂຮງຮຽນມີການພັດທະນາຫ້ອງສະໝຸດ, ຫ້ອງປະຕິບັດການຕ່າງໆຢູ່ສະເໝີ (μ = 3.73, σ=0.89) ຕາມລຳດັບ.

3) ດ້ານການວັດ ແລະ ປະເມີນຜົນ ໂດຍລວມຢູ່ໃນລະດັບຫຼາຍ (μ = 4.00, σ=0.56). ເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າຢູ່ໃນລະດັບຫຼາຍທຸກຂໍ້, ຊຶ່ງຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນ ໂຮງຮຽນມີຂະບວນການກຳນົດລະບຽບແນວປະຕິບັດການວັດ ແລະ ປະເມີນຜົນ (μ = 4.34, σ=0.63), ຮອງລົງມາແມ່ນ ໂຮງຮຽນມີການແຕ່ງຕັ້ງຄະນະກຳມະການວັດຜົນ ແລະ ປະເມີນຜົນຕາມຫຼັກສູດ (μ = 4.20, σ=0.85) ແລະ ດ້ານທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນ ຝ່າຍວິຊາການສະໜັບສະໜູນໃຫ້ຄູຮ່ວມກັນສ້າງແບບທົດສອບແຕ່ລະກຸ່ມສາຂາວິຊາ (μ = 3.73, σ=0.93) ຕາມລຳດັບ.

4) ດ້ານການພັດທະນາສື່ນະວັດຕະກຳ ໂດຍລວມຢູ່ໃນລະດັບຫຼາຍ (μ = 3.79, σ=0.69). ເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າຢູ່ໃນລະດັບຫຼາຍທຸກຂໍ້, ຊຶ່ງຂໍ້ທີ່ມີຄ່າສະເລ່ຍຫຼາຍກວ່າໝູ່ແມ່ນຂໍ້ທີ 10 ໂຮງຮຽນໄດ້ສົ່ງເສີມໃຫ້ຄູຜະລິດສື່ ແລະ ນຳໃຊ້ເຕັກໂນໂລຊີເພື່ອການຮຽນຮູ້ໃຫ້ມີປະສິດທິພາບຕໍ່ຜູ້ຮຽນ (μ = 4.02, σ=0.80), ຮອງລົງມາແມ່ນຂໍ້ທີ 3 ໂຮງຮຽນມີຜົນງານທີ່ເກີດຈາກການສົ່ງເສີມໃຫ້ຄູພັດທະນາສື່ນະວັດຕະກຳການຮຽນ-ການສອນ (μ = 3.92, σ=0.82) ແລະ ດ້ານທີ່ມີຄ່າສະເລ່ຍໜ້ອຍກວ່າໝູ່ແມ່ນຂໍ້ທີ 4 ໂຮງຮຽນມີສື່ ແລະ ນະວັດຕະກຳເພື່ອໃຊ້ໃນການຈັດການຮຽນ-ການສອນຢ່າງພຽງພໍ (μ = 3.56, σ=0.93) ຕາມລຳດັບ.

**2. ຜົນການສຶກສາແນວທາງການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສົງ ແຂວງຫຼວງພະບາງ ມີດັ່ງນີ້:**

1) ດ້ານການພັດທະນາຫຼັກສູດ ມີຮ່າງແນວທາງ 7 ຂໍ້ຍ່ອຍ ຄື: (1) ການພັດທະນາຫຼັກສູດຄວນດຳເນີນຢ່າງເປັນລະບົບ ໂດຍກຳນົດຈຸດປະສົງທີ່ຊັດເຈນ ຈັດປະສົບການການຮຽນຮູ້ທີ່ເໝາະສົມກັບຜູ້ສອນ ແລະ ຜູ້ຮຽນ ນຳໃຊ້ສື່ ແລະ ການຄົ້ນຄ້ວາປະກອບການສອນ ພ້ອມປະເມີນຜົນເພື່ອປັບປຸງຫຼັກສູດໃຫ້ທັນສະໄໝ ແລະ ສາມາດນຳໄປໃຊ້ໄດ້ຈິງ. (2) ໂຮງຮຽນຄວນດຳເນີນການຕິດຕາມ ແລະ ປະເມີນຜົນການນຳໃຊ້ຫຼັກສູດຢ່າງເປັນລະບົບ ແລະ ຕໍ່ເນື່ອງ ໂດຍມີການກຳນົດຕົວຊີ້ວັດ, ສ້າງເຄື່ອງມືເກັບຂໍ້ມູນ, ກວດກາ ແລະ ຖອດຖອນບົດຮຽນ ເພື່ອນຳຜົນໄປປັບປຸງພັດທະນາຫຼັກສູດໃຫ້ມີປະສິດທິຜົນ. (3) ການຈັດເນື້ອໃນຫຼັກສູດຄວນສອດຄ່ອງກັບອຸດົມການ ແລະ ເປົ້າໝາຍການສຶກສາ ໂດຍຄັດເລືອກ ແລະ ຈັດລຳດັບເນື້ອໃນໃຫ້ເໝາະສົມກັບສັງຄົມ, ຊີວິດຈິງ ແລະ ພັດທະນາການຂອງຜູ້ຮຽນ ພ້ອມເຊື່ອມໂຍງການຮຽນຮູ້, ຄຸນສົມບັດ ແລະ ການປະເມີນຜົນຢ່າງຕໍ່ເນື່ອງ. (4) ການຈັດຄູສອນຄວນອີງໃສ່ສາຂາວິຊາທີ່ຮຽນຈົບມາf ຄວາມຖະໜັດf ປະສົບການ ແລະ ວຸດທິການສຶກສາ ເພື່ອໃຫ້ການບັນຈຸ ແລະ ຈັດຊົ່ວໂມງສອນໃຫ້ມີຄວາມເໝາະສົມ ແລະ ການສອນມີປະສິດທິພາບ. (5) ຄູຄວນຈັດທຳເອກະສານປະກອບການສອນໃຫ້ມີຄວາມຫຼາກຫຼາຍ ແລະ ເໝາະສົມ ໂດຍນຳໃຊ້ທັງແບບຮຽນ, ຮູບພາບ, ຕົວຢ່າງຈາກຊີວິດຈິງ ແລະ ເຕັກໂນໂລຊີ ເພື່ອເພີ່ມຄວາມເຂົ້າໃຈ ແລະ ຄວາມໜ້າສົນໃຈໃນການຮຽນ. ພ້ອມທັງໃຊ້ຄຳຖາມກະຕຸ້ນຄວາມຄິດ ແລະ ອີງໃສ່ແຫຼ່ງຂໍ້ມູນທັນສະໄໝເພື່ອໃຫ້ເນື້ອໃນຖືກຕ້ອງ ແລະ ສອດຄ່ອງກັບຊີວິດຈິງ. (6) ຄວນມີການປະເມີນ ແລະ ປັບປຸງຫຼັກສູດໃຫ້ທັນສະໄໝ ໂດຍເນັ້ນການຄິດວິເຄາະ, ການຮຽນຮູ້ຈາກສະພາບຈິງ, ການນຳໃຊ້ເຕັກໂນໂລຊີ ແລະ ຂໍ້ມູນຄວາມຕ້ອງການຈາກຜູ້ມີສ່ວນໄດ້ເສຍ ເພື່ອພັດທະນາການຮຽນ-ການສອນໃຫ້ນັກຮຽນມີສ່ວນຮ່ວມ ແລະ ສອດຄ່ອງກັບສັງຄົມຍຸກໃໝ່. (7) ການພັດທະນາຫຼັກສູດແມ່ນເນັ້ນໃຫ້ທັນສະໄໝ ເຂົ້າໃຈງ່າຍ ແລະ ເນື້ອໃນສອດຄ່ອງກັບຊີວິດຈິງ ໂດຍສົ່ງເສີມທັກສະພື້ນຖານການອ່ານ-ຂຽນ-ຟັງ-ເວົ້າ ພ້ອມທັງພັດທະນາການຄິດວິເຄາະ ການແກ້ບັນຫາ ແລະ ຄວາມຄິດສ້າງສັນ ເພື່ອໃຫ້ຜູ້ຮຽນສາມາດວິເຄາະຂໍ້ມູນ ຕັດສິນໃຈ ແລະ ສ້າງຜົນງານໄດ້ດ້ວຍຕົນເອງ.

2) ດ້ານການພັດທະນາຂະບວນການຮຽນຮູ້ ມີຮ່າງແນວທາງ 5 ຂໍ້ຍ່ອຍ ຄື: (1) ໂຮງຮຽນຄວນສົ່ງເສີມການອົບຮົມຄູ ການນຳໃຊ້ເຕັກໂນໂລຊີ ວັດຖຸຈິງ ແລະ ແຫຼ່ງຮຽນຮູ້ ພ້ອມທັງສະໜັບສະໜູນການແລກປ່ຽນບົດຮຽນ ອຸປະກອນ ICT ແລະ ງົບປະມານ ເພື່ອພັດທະນາສື່ການສອນໃຫ້ມີປະສິດທິພາບ ແລະ ຫຼາກຫຼາຍຂຶ້ນ. (2) ຄວນພັດທະນາຫ້ອງສະໝຸດ ແລະ ຫ້ອງປະຕິບັດການໃຫ້ທັນສະໄໝ ເປັນດິຈິຕອນ ມີອຸປະກອນພ້ອມໃຊ້ ປອດໄພ ແລະ ມີການລະດົມທຶນເພີ່ມເຕີມ ເພື່ອ

ສົ່ງເສີມການຮຽນຮູ້ ແລະ ການຄົ້ນຄວ້າໃຫ້ມີປະສິດທິພາບ. (3) ຄູຄວນຈັດການຮຽນຮູ້ແບບນັກຮຽນເປັນໃຈກາງ ໂດຍນຳໃຊ້ເຕັກນິກ ແລະ ວິທີສອນທີ່ຫຼາກຫຼາຍ ໃຫ້ສອດຄ່ອງກັບເນື້ອໃນ ແລະ ສະຖານະການ ເພື່ອເນັ້ນການຮຽນຮູ້ຈາກການລົງມືປະຕິບັດ ແລະ ປະສົບການຈິງຂອງນັກຮຽນ. (4) ຄູຄວນວິເຄາະຜູ້ຮຽນ ແລະ ອອກແບບການຮຽນການສອນຢ່າງຍືດຍຸ່ນ ໂດຍນຳໃຊ້ສື່ ແລະ ເທັກໂນໂລຊີ ພ້ອມທັງສ້າງແຮງຈູງໃຈ ແລະ ຈັດກິດຈະກຳແບບຜູ້ຮຽນເປັນສຳຄັນ ເພື່ອໃຫ້ສອດຄ່ອງກັບຈຸດປະສົງ ແລະ ຄວາມແຕກຕ່າງຂອງຜູ້ຮຽນ. (5) ຄວນພັດທະນາການຮຽນ-ການສອນແບບນັກຮຽນເປັນໃຈກາງ ໂດຍນຳໃຊ້ເຕັກໂນໂລຊີ ແລະ ສື່ດິຈິຕອນ ພ້ອມທັງວິເຄາະຜູ້ຮຽນ ອອກແບບບົດຮຽນໃຫ້ຍືດຫຍຸ່ນ ເຊື່ອມໂຍງກັບຊີວິດຈິງ ແລະ ປັບບົດບາດຄູເປັນຜູ້ນຳທາງໃນການຮຽນຮູ້ທັງໃນຫ້ອງຮຽນ ແລະ ອອນລາຍ.

3) ການວັດ ແລະ ການປະເມີນຜົນ ມີຮ່າງແນວທາງ 6 ຂໍ້ຍ່ອຍ ຄື: (1) ໂຮງຮຽນຄວນໃຫ້ຄູວາງແຜນການວັດ ແລະ ປະເມີນຜົນຕາມສະພາບຈິງ ໂດຍສອດຄ່ອງກັບລະດັບຄວາມຮູ້ຂອງຜູ້ຮຽນ ເພື່ອໃຊ້ເປັນພື້ນຖານໃນການຈັດການຮຽນ-ການສອນ ແລະ ສະທ້ອນຜົນການຮຽນຢ່າງມີຄຸນນະພາບ. (2) ໂຮງຮຽນກຳນົດໃຫ້ຄູພັດທະນາ ແລະ ນຳໃຊ້ເຄື່ອງມືວັດຜົນ–ປະເມີນຜົນທີ່ອີງໃສ່ຫຼັກສູດ, ມາດຕະຖານ ແລະ ຕົວຊີ້ວັດແຫ່ງຊາດ ໂດຍຄອບຄຸມດ້ານຄວາມຮູ້, ທັກສະ ແລະ ທັດສະນະຄະຕິ ຜ່ານຂັ້ນຕອນການອອກແບບ, ກວດສອບ ແລະ ນຳຂໍ້ມູນໄປພັດທະນາຜູ້ຮຽນ. (3) ຜົນການປະເມີນຖືກນຳມາໃຊ້ເປັນຂໍ້ມູນໃນການຖອດຖອນບົດຮຽນ, ປັບປຸງ ແລະ ພັດທະນາແຜນການສອນ ເພື່ອແກ້ໄຂບັນຫາ ແລະ ຍົກລະດັບຄຸນນະພາບການຮຽນ-ການສອນຢ່າງຕໍ່ເນື່ອງ. (4) ໂຮງຮຽນ ແລະ ຄູມີການວາງແຜນ ແລະ ດຳເນີນການວັດ–ປະເມີນຜົນຢ່າງເປັນລະບົບ ໂດຍໃຊ້ຫຼາຍຮູບແບບ ແລະ ເຄື່ອງມືທີ່ເນັ້ນການຄິດວິເຄາະ, ການມີສ່ວນຮ່ວມ ແລະ ນຳຜົນໄປປັບປຸງຄຸນນະພາບການຮຽນ-ການສອນ. (5) ຝ່າຍວິຊາການສົ່ງເສີມໃຫ້ຄູໃນແຕ່ລະກຸ່ມສາຂາວິຊາຮ່ວມກັນອອກແບບ ຄັດເລືອກ ແລະ ກວດສອບແບບທົດສອບ ໂດຍມີການຈັດຕັ້ງແລະປະສານງານຢ່າງເປັນລະບົບ. (6) ການວັດ ແລະ ປະເມີນຜົນການຮຽນເປັນຂະບວນການຕໍ່ເນື່ອງທີ່ດຳເນີນໃນ 3 ໄລຍະ ຄື ກ່ອນຮຽນ ລະຫວ່າງຮຽນ ແລະ ຫຼັງຮຽນ ເພື່ອວັດພື້ນຖານ ຕິດຕາມພັດທະນາ ແລະ ສະຫຼຸບຜົນການຮຽນຂອງນັກຮຽນ.

4) ການພັດທະນາສື່ນະວັດຕະກຳ ມີຮ່າງແນວທາງ 4 ຂໍ້ຍ່ອຍ ຄື: (1) ໂຮງຮຽນຄວນສຶກສາ ວິເຄາະ ແລະ ວາງແຜນຄວາມຕ້ອງການກ່ອນນຳໃຊ້ນະວັດຕະກຳ ພ້ອມຈັດຝຶກອົບຮົມຄູ ແລະ ເລືອກໃຊ້ລະບົບດິຈິຕອນທີ່ເໝາະສົມໂດຍອີງໃສ່ການວິເຄາະບັນຫາແລະຂໍ້ມູນທີ່ມີ. (2) ໂຮງຮຽນຄວນສຳຫຼວດ ວາງແຜນ ແລະ ພັດທະນາສື່ການຮຽນ-ການສອນໃຫ້ທັນສະໄໝ ພ້ອມສົ່ງເສີມການນຳໃຊ້ໃຫ້ສອດຄ່ອງກັບຄວາມຕ້ອງການຜູ້ຮຽນ ໂດຍອາໄສການມີສ່ວນຮ່ວມຂອງຄູ ແລະນັກຮຽນ. (3) ໂຮງຮຽນຄວນສົ່ງເສີມການນຳໃຊ້ສື່ ແລະ ນະວັດຕະກຳທັນສະໄໝໃນການຮຽນ-ການສອນ ໂດຍຈັດຫາສື່ການສອນທີ່ມີຄຸນນະພາບ, ນຳໃຊ້ລະບົບດິຈິຕອນເພື່ອເພີ່ມປະສິດທິພາບການບໍລິຫານ ແລະ ຫຼຸດການໃຊ້ເຈ້ຍ, ພ້ອມທັງພັດທະນາຄູໃຫ້ມີທັກສະ ICT ແລະ AI ເພື່ອໃຫ້ການສອນເຂົ້າໃຈງ່າຍ ແລະ ມີປະສິດທິພາບຍິ່ງຂຶ້ນ. (4) ໂຮງຮຽນຄວນວາງແຜນ ແລະ ສົ່ງເສີມການນຳໃຊ້ ICT ແລະເທັກໂນໂລຊີທັນສະໄໝໃນການພັດທະນາວຽກງານວິຊາການ ພ້ອມທັງຈັດອົບຮົມ ແລະ ພັດທະນາຄູໃຫ້ມີທັກສະໃນການນຳໃຊ້ IT ໃນການສອນແລະການປະເມີນຜົນ ໂດຍນຳໃຊ້ສື່ດິຈິຕອນ ແລະ ອຸປະກອນທັນສະໄໝໃນການຮຽນ-ການສອນ.

**3. ຜົນການປະເມີນແນວທາງການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສົງ ແຂວງຫຼວງພະບາງ ມີດັ່ງນີ້:**

ຄວາມເໝາະສົມ ໂດຍລວມ ຢູ່ໃນລະດັບຫຼາຍ $(\mu = 4.24, \sigma = 0.38)$. ເມື່ອພິຈາລະນາແຕ່ລະດ້ານພົບວ່າ ທຸກໆດ້ານຢູ່ໃນລະດັບຫຼາຍ; ຄວາມເປັນໄປໄດ້ ໂດຍລວມ ຢູ່ໃນລະດັບຫຼາຍ $(\mu = 4.06, \sigma = 0.47)$ .ເມື່ອພິຈາລະນາແຕ່ລະດ້ານພົບວ່າ ທຸກໆດ້ານຢູ່ໃນລະດັບຫຼາຍ.

**ດ້ານການພັດທະນາຫຼັກສູດ** ມີດັ່ງນີ້: ຄວາມເໝາະສົມໂດຍລວມ ຢູ່ໃນລະດັບຫຼາຍ $(\mu = 4.34, \sigma = 0.42)$. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ທຸກໆຂໍ້ແມ່ນຢູ່ໃນລະດັບຫຼາຍ; ຄວາມເປັນໄປໄດ້ ໂດຍລວມ ຢູ່ໃນລະດັບຫຼາຍ $(\mu = 4.16, \sigma = 0.54)$. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ທຸກໆຂໍ້ແມ່ນຢູ່ໃນລະດັບຫຼາຍ.

**ດ້ານການພັດທະນາຂະບວນການຮຽນຮູ້** ມີດັ່ງນີ້: ຄວາມເໝາະສົມ ໂດຍລວມ ຢູ່ໃນລະດັບຫຼາຍ $(\mu = 4.15, \sigma = 0.55)$. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ທຸກໆຂໍ້ແມ່ນຢູ່ໃນລະດັບຫຼາຍ; ຄວາມເປັນໄປໄດ້ ໂດຍລວມ ຢູ່ໃນລະດັບຫຼາຍ $(\mu = 4.01, \sigma = 0.58)$. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ທຸກໆຂໍ້ແມ່ນຢູ່ໃນລະດັບຫຼາຍ.

**ດ້ານການວັດ ແລະ ການປະເມີນຜົນ** ມີດັ່ງນີ້: ຄວາມເໝາະສົມ ໂດຍລວມ ຢູ່ໃນລະດັບຫຼາຍ $(\mu = 4.22, \sigma = 0.45)$. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ທຸກໆຂໍ້ແມ່ນຢູ່ໃນລະດັບຫຼາຍ; ຄວາມເປັນໄປໄດ້ ໂດຍລວມ ຢູ່ໃນລະດັບຫຼາຍ $(\mu = 4.06, \sigma = 0.51)$. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ທຸກໆຂໍ້ແມ່ນຢູ່ໃນລະດັບຫຼາຍ

**ດ້ານການພັດທະນາສື່ນະວັດຕະກຳ** ມີດັ່ງນີ້: ຄວາມເໝາະສົມ ໂດຍລວມ ຢູ່ໃນລະດັບຫຼາຍ $(\mu = 4.23, \sigma = 0.36)$. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ທຸກໆຂໍ້ແມ່ນຢູ່ໃນລະດັບຫຼາຍ; ຄວາມເປັນໄປໄດ້ ໂດຍລວມ ຢູ່ໃນລະດັບຫຼາຍ $(\mu = 4.02, \sigma = 0.50)$. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ທຸກໆຂໍ້ແມ່ນຢູ່ໃນລະດັບຫຼາຍ.

## 4. ວິພາກຜົນ

**4.1 ຜົນການວິເຄາະຂໍ້ມູນກ່ຽວກັບສະພາບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສິງ ແຂວງຫຼວງພະບາງ ມີດັ່ງນີ້:**

ສະພາບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສິງ ແຂວງຫຼວງພະບາງ ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະດ້ານພົບວ່າທຸກໆ ດ້ານແມ່ນຢູ່ໃນລະດັບຫຼາຍ. ຊຶ່ງມີລາຍລະອຽດແຕ່ລະດ້ານ ຄື: 1) ດ້ານການພັດທະນາຫຼັກສູດໂດຍລວມຢູ່ໃນລະດັບຫຼາຍ ອາດເປັນຍ້ອນເຫດຜົນວ່າ ການພັດທະນາຫຼັກສູດເປັນເລື່ອງທີ່ສຳຄັນທີ່ໂຮງຮຽນຕ້ອງປະຕິບັດ, ໂຮງຮຽນໄດ້ວິເຄາະຂໍ້ມູນ, ຈຸດແຂງ, ຈຸດອ່ອນ, ໂອກາດ ແລະ ອຸປະສັກຂອງໂຮງຮຽນ ແລະ ການພັດທະນາຫຼັກສູດຕ້ອງມີຄວາມຮູ້, ຄວາມສາມາດຂອງບຸກຄະລາກອນທຸກພາກສ່ວນທີ່ກ່ຽວຂ້ອງ; 2) ດ້ານການພັດທະນາຂະບວນການຮຽນຮູ້ ໂດຍລວມຢູ່ໃນລະດັບຫຼາຍ ອາດເປັນຍ້ອນເຫດຜົນວ່າ ໂຮງຮຽນສົ່ງເສີມໃຫ້ຄູຜູ້ສອນແຕ່ງບົດສອນຊອກຫາຄວາມຮູ້ໃໝ່ໆ ເພື່ອພັດທະນາການສຶກສາໃນໂຮງຮຽນ, ໂຮງຮຽນກຳນົດໃຫ້ຄູຜູ້ສອນຈັດຂະບວນການຮຽນຮູ້ທີ່ເນັ້ນເອົານັກຮຽນເປັນໃຈກາງ ແລະ ໂຮງຮຽນກຳນົດການພັດທະນາຂະບວນການສອນ ເພື່ອໃຫ້ຄູເຂົ້າໃຈເນື້ອໃນການຮຽນຮູ້ ແລະ ຄິດເຖິງວິທີການສອນທີ່ເໝາະສົມ; 3) ດ້ານການວັດ ແລະ ປະເມີນຜົນ ໂດຍລວມຢູ່ໃນລະດັບຫຼາຍ ອາດເປັນຍ້ອນວ່າໂຮງຮຽນມີຂະບວນການກຳນົດລະບຽບແນວປະຕິບັດການວັດ ແລະ ປະເມີນຜົນ, ໂຮງຮຽນມີການແຕ່ງຕັ້ງຄະນະກຳມະການວັດຜົນ ແລະ ປະເມີນຜົນຕາມຫຼັກສູດ ແລະ ການວັດ ແລະ ປະເມີນຜົນແມ່ນວັດຜົນສຳເລັດ ແລະ ຜົນໄດ້ຮັບການຮຽນຮູ້ຂອງນັກຮຽນ ເພື່ອປັບປຸງການຮຽນ-ການສອນ ແລະ 4) ດ້ານການພັດທະນາສື່ນະວັດຕະກຳ ໂດຍລວມຢູ່ໃນລະດັບຫຼາຍ ອາດເປັນຍ້ອນວ່າໂຮງຮຽນໄດ້ສົ່ງເສີມໃຫ້ຄູພະລິດສື່ ແລະ ນຳໃຊ້ເຕັກໂນໂລຊີເພື່ອການຮຽນຮູ້ໃຫ້ມີປະສິດທິພາບຕໍ່ຜູ້ຮຽນ, ໂຮງຮຽນມີຜົນງານທີ່ເກີດຈາກການສົ່ງເສີມໃຫ້ຄູພັດທະນາສື່ນະວັດຕະກຳການຮຽນ-ການສອນ ແລະ ໂຮງຮຽນສົ່ງເສີມໃຫ້ຄູຜູ້ສອນພັດທະນາສື່, ແບບຮຽນ ແລະ ແຫຼ່ງການຮຽນທີ່ຫຼາກຫຼາຍ. ຊຶ່ງສອດຄ່ອງກັບບົດຄົ້ນຄວ້າຂອງ (Phalibay, 2025) ໄດ້ສຶກສາເລື່ອງ ສະພາບການບໍລິຫານວຽກງານວິຊາການສູ່ຄຸນນະພາບຜູ້ຮຽນຂອງມະຫາວິທະຍາໄລສຸພານຸວົງ ຜົນການຄົ້ນຄວ້າພົບວ່າ ສະພາບການຈັດຕັ້ງປະຕິບັດການຈັດການຮຽນການສອນລະດັບປະລິນຍາຕີຢູ່ມະຫາວິທະຍາໄລສຸພານຸວົງ ຢູ່ໃນລະດັບດີ ບໍ່ວ່າຈະເປັນດ້ານການ ດ້ານຫຼັກສູດ ແລະ ການນຳຫຼັກສູດໄປໃຊ້, ດ້ານການຈັດການຮຽນ ການສອນ, ດ້ານສື່ ການຮຽນ-ການສອນ, ດ້ານການວັດ ແລະ ປະເມີນຜົນ, ດ້ານການນິເທດສຶກສາ, ແລະ ດ້ານຫໍສະໝຸດ; (Sylisongkhams, 2022) ໄດ້ສຶກສາເລື່ອງ ການບໍລິຫານວຽກງານວິຊາການ ໂຮງຮຽນປະຖົມສຶກສາ ເມືອງສາລະວັນ ແຂວງສາລະວັນ ຜົນການຄົ້ນຄວ້າພົບວ່າ ການບໍລິຫານວິຊາການໂຮງຮຽນປະຖົມສຶກສາເມືອງສາລະ ວັນ, ແຂວງສາລະວັນ ໂດຍພາບລວມໃນລະດັບດີ, ເມື່ອພິຈາລະນາແຕ່ລະດ້ານເຫັນວ່າຢູ່ ໃນລະດັບດີທຸກດ້ານ ແລະ ດີກວ່າໝູ່ແມ່ນການບໍລິຫານການວັດ-ປະເມີນຜົນ, ລອງລົງມາ ແມ່ນການບໍລິຫານການຈັດການຮຽນ-ການສອນ, ດ້ານຫຼັກສູດ, ດ້ານການນິເທດພາຍໃນ ແລະ ການບໍລິຫານສື່ການຮຽນ-ການສອນຕາມລຳດັບ ແລະ ບົດຄົ້ນຄວ້າຂອງ (Silichantho, 2020) ໄດ້ສຶກສາເລື່ອງ ສະພາບບັນຫາ ແລະ ແນວທາງການບໍລິຫານວຽກງານວິຊາການ ຂອງວິທະຍາໄລສິງ ຈຳປາສັກ ເມືອງປາກເຊ ແຂວງຈຳປາສັກ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ຜົນການຄົ້ນຄວ້າພົບວ່າ ສະພາບການບໍລິຫານວຽກງານວິຊາການຂອງມະຫາວິທະຍາໄລສິງຈຳປາສັກ ໂດຍລວມຢູ່ໃນລະດັບຫຼາຍ ແລະ ເມື່ອພິຈາລະນາແຕ່ລະດ້ານ ຄື: ດ້ານຫຼັກສູດ ແລະ ການນຳໃຊ້ຫຼັກສູດ, ດ້ານການຈັດການຮຽນການສອນ, ດ້ານສື່ການຮຽນການສອນ, ດ້ານການວັດ ແລະ ປະເມີນຜົນ ແລະ ດ້ານການນິເທດພາຍໃນ ເຫັນວ່າທຸກໆດ້ານແມ່ນຢູ່ໃນລະດັບຫຼາຍ.

**4.2 ຜົນການສຶກສາແນວທາງການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສິງ ແຂວງຫຼວງພະບາງ ມີດັ່ງນີ້:**

1) ດ້ານການພັດທະນາຫຼັກສູດ ຄວນສົ່ງເສີມໃຫ້ມີການພັດທະນາຫຼັກສູດຄວນດຳເນີນຢ່າງເປັນລະບົບ ມີການຕິດຕາມ ແລະ ປະເມີນຜົນຢ່າງຕໍ່ເນື່ອງ ຈັດເນື້ອໃນ ແລະ ບຸກຄະລາກອນໃຫ້ເໝາະສົມ ນຳໃຊ້ສື່ການສອນທີ່ຫຼາກຫຼາຍ ແລະ ປັບປຸງໃຫ້ທັນສະໄໝ ເພື່ອພັດທະນາທັກສະ, ການຄິດວິເຄາະ, ການແກ້ບັນຫາ ແລະ ຄວາມສາມາດຂອງຜູ້ຮຽນໃຫ້ສອດຄ່ອງກັບສັງຄົມຍຸກໃໝ່; 2) ດ້ານການພັດທະນາຂະບວນການຮຽນຮູ້ ສົ່ງເສີມໃຫ້ໂຮງຮຽນ ແລະ ຄູຄວນຮ່ວມກັນພັດທະນາສື່ ແລະ ແຫຼ່ງຮຽນຮູ້ດິຈິຕອນ ສົ່ງເສີມການໃຊ້ເຕັກໂນໂລຊີ ຈັດການຮຽນການສອນແບບນັກຮຽນເປັນໃຈກາງ ທີ່ຍືດຫຍຸ່ນ ແລະ ສອດຄ່ອງກັບຄວາມແຕກຕ່າງຂອງຜູ້ຮຽນ ເພື່ອຍົກລະດັບຄຸນນະພາບການຮຽນຮູ້ໃຫ້ມີປະສິດທິຜົນສູງຂຶ້ນ; 3) ດ້ານການວັດ ແລະ ປະເມີນຜົນ ສະເໜີໃຫ້ໂຮງຮຽນຄວນດຳເນີນການວັດ ແລະ ປະເມີນຜົນຢ່າງເປັນລະບົບ ຕາມສະພາບຈິງ ແລະ ອີງໃສ່ຫຼັກສູດ, ມາດຕະຖານ ໂດຍໃຊ້ເຄື່ອງມືຫຼາຍຮູບແບບ ດຳເນີນຕໍ່ເນື່ອງກ່ອນຮຽນ, ລະຫວ່າງຮຽນ ແລະ ຫຼັງຮຽນ ພ້ອມນຳຜົນການປະເມີນໄປປັບປຸງການຮຽນ-ການສອນ ແລະ ພັດທະນາຜູ້ຮຽນຢ່າງມີຄຸນນະພາບ ແລະ 4) ດ້ານການພັດທະນາສື່ນະວັດຕະກຳ ສົ່ງເສີມໃຫ້ໂຮງຮຽນຄວນວາງແຜນ ແລະ ສົ່ງເສີມການນຳໃຊ້ສື່, ນະວັດຕະກຳ, ICT, AI ແລະ ເຕັກໂນໂລຊີດິຈິຕອນທັນສະໄໝ ຄວບຄູ່ກັບການພັດທະນາຄູ ເພື່ອຍົກລະດັບຄຸນນະພາບການຮຽນ-ການສອນ ແລະ ປະສິດທິຜົນການບໍລິຫານວິຊາການ. ຊຶ່ງສອດຄ່ອງກັບ. ສອດຄ່ອງກັບບົດຄົ້ນຄວ້າຂອງ (Khaison, 2017) ພົບວ່າ ແນວທາງການບໍລິຫານວຽກງານວິຊາການ ຕາມຄວາມຄິດເຫັນຂອງຄູ ໃນແຕ່ລະລັກສະນະຂອງວຽກ ມີດັ່ງນີ້: 1) ດ້ານການພັດທະນາຫຼັກສູດ: ຄວນໃຫ້ຜູ້ບໍລິຫານ, ຄູ ແລະ ຄະນະກຳມະການຮ່ວມກັນວາງແຜນ, ອົບຮົມ ແລະ

ພັດທະນາຫຼັກສູດໃຫ້ສອດຄ່ອງກັບວິໄສທັດ, ເປົ້າໝາຍ ແລະ ຄວາມຕ້ອງການຂອງທ້ອງຖິ່ນ; 2) ດ້ານການພັດທະນາຂະບວນການຮຽນຮູ້: ຄວນສົ່ງເສີມການນຳພູມປັນຍາທ້ອງຖິ່ນ, ຜູ້ປົກຄອງ ແລະ ຊຸມຊົນມາມີສ່ວນຮ່ວມ ພ້ອມຈັດການຮຽນຮູ້ທີ່ເນັ້ນຜູ້ຮຽນ ແລະ ມີສະພາບແວດລ້ອມທີ່ເອື້ອຕໍ່ການຮຽນ; 3) ດ້ານການວັດຜົນ, ການປະເມີນຜົນ: ຄວນຮ່ວມກັນກຳນົດແນວປະຕິບັດ, ວັດແລະປະເມີນຜົນຢ່າງເປັນລະບົບ, ນຳຜົນໄປປັບປຸງການຮຽນຮູ້ ແລະ ເນັ້ນການປະເມີນຕາມສະພາບຈິງ; ດ້ານການພັດທະນາແຫຼ່ງຮຽນຮູ້: ຄວນສະໜັບສະໜູນງົບປະມານ ແລະ ພັດທະນາແຫຼ່ງຮຽນຮູ້ໃນຊຸມຊົນ ໃຫ້ຫຼາກຫຼາຍ ແລະ ເອື້ອຕໍ່ການຮຽນຮູ້ຈາກການປະຕິບັດຈິງ ແລະ (Vilaihla, 2560) ພົບວ່າ ແນວທາງການພັດທະນາການບໍລິຫານງານວິຊາການຂອງໂຮງຮຽນ ໃນສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມ ເຂດ 27 ມີຄື: 1) ດ້ານການພັດທະນາຫຼັກສູດສະຖານສຶກສາ: ສຶກສາ ແລະ ວິເຄາະຫຼັກສູດ ແລະ ສະພາບຄວາມຕ້ອງການ, ກຳນົດວິໄສທັດ ແລະ ເປົ້າໝາຍຮ່ວມກັນ, ຈັດທຳ ແລະ ນຳຫຼັກສູດໄປໃຊ້, ນິເທດ ຕິດຕາມ ປະເມີນຜົນ ແລະ ປັບປຸງຫຼັກສູດໃຫ້ເໝາະສົມ; 2) ດ້ານການວັດຜົນ ແລະ ປະເມີນຜົນ: ສະຖານສຶກສາມີການວາງແຜນ ແລະ ຈັດລະບົບການວັດຜົນ-ປະເມີນຜົນໃຫ້ສອດຄ່ອງກັບຫຼັກສູດ ແລະ ມາດຕະຖານການສຶກສາ, ສົ່ງເສີມຄູໃຫ້ຈັດເຮັດແຜນການວັດຜົນແຕ່ລະລາຍວິຊາ, ຈັດໃຫ້ມີການທຽບໂອນຄວາມຮູ້ ທັກສະ ແລະ ຜົນການຮຽນຕາມລະບຽບ, ພ້ອມທັງນິເທດກຳກັບ ຕິດຕາມ ແລະ ສຳຫຼວດຄວາມພໍໃຈຂອງຜູ້ກ່ຽວຂ້ອງ; 3) ດ້ານການພັດທະນາຂະບວນການຮຽນຮູ້: ສະຖານສຶກສາມີການວາງແຜນ ແລະ ພັດທະນາຂະບວນການຮຽນຮູ້ໂດຍເນັ້ນຜູ້ຮຽນເປັນສຳຄັນ, ສົ່ງເສີມຄູໃຫ້ຈັດເຮັດແຜນການຮຽນຮູ້ຕາມຄວາມສົນໃຈ ແລະ ຄວາມຖະໜັດຂອງຜູ້ຮຽນ, ພັດທະນາທັກສະການຄິດ ແລະ ຄຸນທຳ, ພ້ອມທັງອົບຮົມພັດທະນາຄູ, ນິເທດ ຕິດຕາມ ແລະ ປະເມີນຜົນການຈັດການຮຽນຮູ້ ແລະ 4) ດ້ານການພັດທະນາ ແລະ ສົ່ງເສີມແຫຼ່ງຮຽນຮູ້: ແມ່ນການສຳຫຼວດ ແລະ ຈັດຫາແຫຼ່ງຮຽນຮູ້ທັງພາຍໃນ ແລະ ພາຍນອກສະຖານສຶກສາ, ສົ່ງເສີມໃຫ້ຄູນຳໃຊ້ແຫຼ່ງຮຽນຮູ້ໃນການສອນ, ບູລະນາການກັບຫຼັກສູດ, ນຳໃຊ້ພູມປັນຍາທ້ອງຖິ່ນ, ຈັດເຮັດທະບຽນແຫຼ່ງຮຽນຮູ້ ແລະ ມີການປະເມີນຜົນເພື່ອນຳມາປັບປຸງພັດທະນາການສຶກສາ.

**4.3 ຜົນການປະເມີນແນວທາງການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສົງ ແຂວງຫຼວງພະບາງ ມີດັ່ງນີ້:** 1) ດ້ານການພັດທະນາຫຼັກສູດ: ໂດຍລວມ ທັງດ້ານຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຢູ່ໃນລະດັບ ຫຼາຍ. ສະທ້ອນວ່າ ໂຮງຮຽນມີການພັດທະນາ, ຕິດຕາມ ແລະ ປັບປຸງຫຼັກສູດຢ່າງເປັນລະບົບ, ນຳໃຊ້ເຕັກໂນໂລຊີ ແລະ ຂໍ້ມູນຈາກຜູ້ມີສ່ວນກ່ຽວຂ້ອງ, ຈັດການຮຽນຮູ້ທີ່ເນັ້ນສະພາບຈິງ ແລະ ສົ່ງເສີມທັກສະການຄິດວິເຄາະ, ການແກ້ບັນຫາ, ຄວາມຄິດສ້າງສັນ ແລະ ການນຳຄວາມຮູ້ໄປປະຍຸກໃຊ້ໄດ້ຈິງ. 2) ດ້ານການພັດທະນາຂະບວນການຮຽນຮູ້: ໂດຍລວມ ທັງດ້ານຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຢູ່ໃນລະດັບ ຫຼາຍ. ສະທ້ອນວ່າ ໂຮງຮຽນເນັ້ນການຮຽນ-ການສອນແບບນັກຮຽນເປັນໃຈກາງ, ພັດທະນາຄູ ແລະ ແຫຼ່ງຮຽນຮູ້, ນຳໃຊ້ສື່ດິຈິຕອນ ແລະ ICT ຢ່າງເໝາະສົມ, ພ້ອມທັງສະໜັບສະໜູນອຸປະກອນ ແລະ ງົບປະມານ ເພື່ອຍົກລະດັບຄຸນນະພາບ ແລະ ປະສິດທິຜົນການຮຽນຮູ້; 3) ດ້ານການວັດ ແລະ ການປະເມີນຜົນ: ໂດຍລວມ ທັງດ້ານຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຢູ່ໃນລະດັບ ຫຼາຍ. ສະທ້ອນວ່າ ໂຮງຮຽນມີການວາງແຜນ ແລະ ດຳເນີນການວັດແລະປະເມີນຜົນຢ່າງເປັນລະບົບ, ໃຊ້ຫຼາຍວິທີ ແລະ ເຄື່ອງມືທີ່ສອດຄ່ອງກັບຫຼັກສູດ, ມາດຕະຖານ ແລະ ຕົວຊີ້ວັດ, ຄອບຄຸມທັງຄວາມຮູ້, ທັກສະ ແລະ ທັດສະນະຄະຕິ. ພ້ອມທັງນຳຜົນການປະເມີນໄປໃຊ້ປັບປຸງການສອນ, ແກ້ໄຂບັນຫາ ແລະ ພັດທະນາຜູ້ຮຽນຢ່າງຕໍ່ເນື່ອງ. 4) ດ້ານການພັດທະນາສື່ນະວັດຕະກຳ: ໂດຍລວມ ທັງດ້ານຄວາມເໝາະສົມ ແລະ ຄວາມເປັນໄປໄດ້ ຢູ່ໃນລະດັບ ຫຼາຍ. ສະທ້ອນວ່າ ໂຮງຮຽນມີການວາງແຜນ ແລະ ພັດທະນາສື່ນະວັດຕະກຳທັນສະໄໝ, ນຳໃຊ້ລະບົບດິຈິຕອນ, ICT ແລະ AI ຢ່າງເໝາະສົມ, ວິເຄາະຄວາມຕ້ອງການກ່ອນນຳໃຊ້ ແລະ ສົ່ງເສີມຄູ–ນັກຮຽນໃຫ້ມີສ່ວນຮ່ວມ. ພ້ອມທັງພັດທະນາສັກຍະພາບຄູ ເພື່ອນຳນະວັດຕະກຳມາຍົກລະດັບຄຸນນະພາບ ແລະ ປະສິດທິຜົນການຮຽນ–ການສອນ. ສອດຄ່ອງກັບບົດຄົ້ນຄວ້າຂອງ (Yodkhumbai, 2023) ພົບວ່າແນວທາງການບໍລິຫານງານວິຊາການຂອງໂຮງຮຽນ ສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາ ສະມຸດສາຄອນ-ສະມຸດສົງຄາມ ໄດ້ເນັ້ນ 3 ດ້ານສຳຄັນ ຄື: (1) ການພັດທະນາສື່ ນະວັດຕະກຳ ແລະ ເຕັກໂນໂລຊີການສຶກສາ ໂດຍມີການວາງແຜນ ອອກແບບ ນຳໃຊ້ ຕິດຕາມ ແລະ ປະເມີນຜົນ; (2) ການວັດ ແລະ ປະເມີນຜົນການຮຽນ ໂດຍຈັດການຢ່າງເປັນລະບົບ ເພື່ອນຳຜົນໄປໃຊ້ພັດທະນາການຮຽນຮູ້; ແລະ (3) ການພັດທະນາຂະບວນການຮຽນຮູ້ ໂດຍວິເຄາະຄວາມຕ້ອງການຜູ້ຮຽນອອກແບບການຮຽນຮູ້ໃຫ້ເໝາະສົມ ແລະ ພັດທະນາສື່ການຮຽນຮູ້ທີ່ໜ້າສົນໃຈ ແລະ ມີຄຸນນະພາບ ແລະ (Jina, 2025) ພົບວ່າ ແນວທາງການພັດທະນາການບໍລິຫານວິຊາການເພື່ອສ້າງຄວາມເປັນເລີດໃຫ້ແກ່ຜູ້ຮຽນ ພົບວ່າ: ການພັດທະນາຫຼັກສູດ ຄວນອອກແບບໃຫ້ສອດຄ່ອງກັບມາດຕະຖານສາກົນ, ຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ທັກສະສະເພາະດ້ານຂອງແຕ່ລະກຸ່ມຫຼັກສູດ; ການພັດທະນາຂະບວນການຮຽນຮູ້ ຄວນສົ່ງເສີມການຮຽນຮູ້ແບບໂຄງງານ, ການຮຽນຮູ້ຜ່ານເທັກໂນໂລຊີ ແລະ ການພັດທະນາທັກສະສະເພາະດ້ານ; ການວັດຜົນ, ການປະເມີນຜົນ ແລະ ການທຽບໂອນຜົນການຮຽນ ຄວນນຳໃຊ້ມາດຕະຖານສາກົນໃນການວັດຜົນດ້ານວິຊາການ ແລະ ປະເມີນຈາກຜົນງານທີ່ເກີດຂຶ້ນຈິງ, ລວມເຖິງອັດຕາການມີວຽກເຮັດງານທຳສຳລັບຫຼັກສູດວິຊາຊີບ; ການວິໄຈເພື່ອພັດທະນາຄຸນນະພາບການສຶກສາ ຄວນ

ສົ່ງເສີມ ແລະ ສະໜັບສະໜູນການວິໄຈຂອງຄູ ແລະ ນັກຮຽນ ເພື່ອນຳຜົນການວິໄຈມາປັບປຸງການຮຽນການສອນ ພ້ອມທັງສ້າງຄວາມຮ່ວມມືກັບພາກອຸດສາຫະກຳ ແລະ ສະຖາບັນການສຶກສາ; ການພັດທະນາແຫຼ່ງຮຽນຮູ້, ສື່, ນະວັດຕະກຳ ແລະ ເທັກໂນໂລຊີການສຶກສາ ຄວນພັດທະນາໃຫ້ທັນສະໄໝ ແລະ ສາມາດນຳມາໃຊ້ເພື່ອສົ່ງເສີມການຮຽນຮູ້ຂອງຜູ້ຮຽນ.

**5. ສະຫຼຸບ**

ການຄົ້ນຄວ້າຄັ້ງນີ້ ເປັນການສຶກສາກ່ຽວກັບແນວທາງການບໍລິຫານວຽກງານວິຊາການໂຮງຮຽນມັດທະຍົມສຶກສາສິງ ແຂວງຫຼວງພະບາງ ພົບວ່າ:

1. ສະພາບການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສິງ ແຂວງຫຼວງພະບາງ ໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນແຕ່ລະດ້ານພົບວ່າຢູ່ໃນລະດັບຫຼາຍທຸກດ້ານຄື: ດ້ານການພັດທະນາຫຼັກສູດ, ດ້ານການພັດທະນາຂະບວນການຮຽນຮູ້, ດ້ານການວັດ ແລະ ປະເມີນຜົນ ໂດຍລວມຢູ່ໃນລະດັບຫຼາຍ ແລະ ດ້ານການພັດທະນາສື່ນະວັດຕະກຳ.

2. ຮ່າງແນວທາງການບໍລິຫານວຽກງານວິຊາການໂຮງຮຽນມັດທະຍົມສຶກສາສິງ ແຂວງຫຼວງພະບາງ ມີດັ່ງນີ້:

(1) ດ້ານການພັດທະນາຫຼັກສູດ ມີ 7 ຂໍ້, ຊຶ່ງມີເນື້ອໃນໂດຍຫຍໍ້ ຄື: ການພັດທະນາຫຼັກສູດຄວນດຳເນີນຢ່າງເປັນລະບົບ ມີການຕິດຕາມ ແລະ ປະເມີນຜົນຢ່າງຕໍ່ເນື່ອງ ຈັດເນື້ອໃນ ແລະ ບຸກຄະລາກອນໃຫ້ເໝາະສົມ ນຳໃຊ້ສື່ການສອນທີ່ຫຼາກຫຼາຍ ແລະ ປັບປຸງໃຫ້ທັນສະໄໝ ເພື່ອພັດທະນາທັກສະ, ການຄິດວິເຄາະ, ການແກ້ບັນຫາ ແລະ ຄວາມສາມາດຂອງຜູ້ຮຽນໃຫ້ສອດຄ່ອງກັບສັງຄົມຍຸກໃໝ່.

(2) ດ້ານການພັດທະນາຂະບວນການຮຽນຮູ້ ມີ 5 ຂໍ້, ຊຶ່ງມີເນື້ອໃນໂດຍຫຍໍ້ ຄື: ໂຮງຮຽນ ແລະ ຄູຄວນຮ່ວມກັນພັດທະນາສື່ ແລະ ແຫຼ່ງຮຽນຮູ້ດິຈິຕອນ ສົ່ງເສີມການໃຊ້ເຕັກໂນໂລຊີ ຈັດການຮຽນການສອນແບບນັກຮຽນເປັນໃຈກາງ ທີ່ຍືດຫຍຸ່ນ ແລະ ສອດຄ່ອງກັບຄວາມແຕກຕ່າງຂອງຜູ້ຮຽນ ເພື່ອຍົກລະດັບຄຸນນະພາບການຮຽນຮູ້ໃຫ້ມີປະສິດທິຜົນສູງຂຶ້ນ.

(3) ດ້ານການວັດ ແລະ ປະເມີນຜົນ ມີ 6 ຂໍ້, ຊຶ່ງມີເນື້ອໃນໂດຍຫຍໍ້ ຄື: ໂຮງຮຽນຄວນດຳເນີນການວັດ ແລະ ປະເມີນຜົນຢ່າງເປັນລະບົບ ຕາມສະພາບຈິງ ແລະ ອີງໃສ່ຫຼັກສູດ, ມາດຕະຖານ ໂດຍໃຊ້ເຄື່ອງມືຫຼາຍຮູບແບບ ດຳເນີນຕໍ່ເນື່ອງກ່ອນຮຽນ, ລະຫວ່າງຮຽນ ແລະ ຫຼັງຮຽນ ພ້ອມນຳຜົນການປະເມີນໄປປັບປຸງການຮຽນ-ການສອນ ແລະ ພັດທະນາຜູ້ຮຽນຢ່າງມີຄຸນນະພາບ.

(4) ດ້ານການພັດທະນາສື່ນະວັດຕະກຳ ມີ 4 ຂໍ້, ຊຶ່ງມີເນື້ອໃນໂດຍຫຍໍ້ ຄື: ໂຮງຮຽນຄວນວາງແຜນ ແລະ ສົ່ງເສີມການນຳໃຊ້ສື່, ນະວັດຕະກຳ, ICT, AI ແລະ ເຕັກໂນໂລຊີດິຈິຕອນທັນສະໄໝຄວບຄູ່ກັບການພັດທະນາຄູ ເພື່ອຍົກລະດັບຄຸນນະພາບການຮຽນ-ການສອນ ແລະ ປະສິດທິຜົນການບໍລິຫານວິຊາການ.

3. ຜົນການປະເມີນແນວທາງການບໍລິຫານວຽກງານວິຊາການຂອງໂຮງຮຽນມັດທະຍົມສຶກສາສິງ ແຂວງຫຼວງພະບາງ ມີຄື: ມາດຕະຖານການປະເມີນແນວທາງການບໍລິຫານວຽກງານວິຊາການໂດຍລວມເຫັນວ່າມີຄວາມຄວາມເໝາະສົມ ແລະ ເປັນໄປໄດ້ໃນລະດັບຫຼາຍເຊັ່ນ:

(1) ດ້ານການພັດທະນາຫຼັກສູດ ຄວາມເໝາະສົມໂດຍລວມ ຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ທຸກໆຂໍ້ແມ່ນຢູ່ໃນລະດັບຫຼາຍ ແລະ ຄວາມເປັນໄປໄດ້ ໂດຍລວມ ຢູ່ໃນລະດັບຫຼາຍ.

(2) ດ້ານການພັດທະນາຂະບວນການຮຽນຮູ້ ຄວາມເໝາະສົມ ໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ທຸກໆຂໍ້ແມ່ນຢູ່ໃນລະດັບຫຼາຍ ແລະ ຄວາມເປັນໄປໄດ້ ໂດຍລວມຢູ່ໃນລະດັບຫຼາຍ.

(3) ດ້ານການວັດ ແລະ ປະເມີນຜົນ ຄວາມເໝາະສົມໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ທຸກໆຂໍ້ແມ່ນຢູ່ໃນລະດັບຫຼາຍ ແລະ ຄວາມເປັນໄປໄດ້ ໂດຍລວມ ຢູ່ໃນລະດັບຫຼາຍ.

(4) ດ້ານການພັດທະນາສື່ນະວັດຕະກຳ ຄວາມເໝາະສົມໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາແຕ່ລະຂໍ້ພົບວ່າ ທຸກໆຂໍ້ແມ່ນຢູ່ໃນລະດັບຫຼາຍ ແລະ ຄວາມເປັນໄປໄດ້ ໂດຍລວມ ຢູ່ໃນລະດັບຫຼາຍ.

**6. ຂໍ້ຂັດແຍ່ງ**

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ຢູ່ໃນບົດຄວາມວິຊາການບົດນີ້ບໍ່ມີຂໍ້ຂັດແຍ່ງກັບພາກສ່ວນໃດ, ກໍລະນີມີການລະເມີດໃນຮູບການໃດກໍຕາມ ຂ້າພະເຈົ້າຍິນດີທີ່ຈະຮັບຜິດຊອບຜູ້ດຽວ.

**7. ເອກະສານອ້າງອີງ**

Cronbach, L. J. (1990). *Essentials of psychological testing (5th ed.).* New York: Harper & Row.

Jina, R. (2025). The Guidelines for Academic Management to Foster Excellence in Students at Schools under the Chiang Rai Provincial Administration Organization. *Journal of Association of Professional Development of Educational Administration of Thailand (JAPDEAT)*, 251-265.

Khaison, O. (2017). *Guidelines for the Development of Academic Administration in Large Schools under Chaiyaphum Primary Educational Service*

*Area Office 3* [Master's thesis]. Maha Sarakham: Mahasarakham University.

Ministry of Education. (2003). *Ministry of Education Regulatory Act B.E.* Bangkok: Ministry of Education.

Ministry of Education and Sports. (2013). *Vision and Strategic Plan for Education Development.* Vientiane Capital: Ministry of Education and Sports.

Ministry of Education and Sports. (2024). *Summary of the Implementation of the Education and Sports Sector Development Plan for the Academic Year 2023–2024 and the Education Sector Development Plan for the Academic Year 2024–2025.* Vientiane Capita: Ministry of Education and Sports.

Office of the National Education Council. (2017). *National Education Standards.* Vientiane Capital: Office of the National Education Council.

Phalibay, B. (2025). The Academic Affairs Administration for Learner's Quality of Souphanouvong University. *Journal of Science and Teacher Education (JLSTE), 1(1)*, 61-71.

Sallis, E. (2018). *Total quality management in education.* New York: Routledge.

Silichantho, S. (2020). Problems and guidelines for academic administration of Champasak Sangha College, Pakse District, Champasak Province, Lao People's Democratic Republic. *Bua Bandit Journal of Educational Administration, 20(3), 35–46*, 35-46.

Srisa-ard, B. (2011). *Basic Research (9th ed., rev.).* Bangkok: Suweeriyasan Company.

Stufflebeam, D. L. (2001). The Mateavaluation imperative. *The American Joural of Evaluation.t,*, 183-209.

Sylisongkhams, S. (2022). Academic administration of primary schools in Salavan District, Salavan Province. *Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 8. Issue 1. Jan – Jun 2022*, 162-168.

Vilaihla, P. (2560). *Conditions, Problems, and Development Guidelines for Academic Administration of Schools under Secondary Educational Service Area Office 27 (Master's thesis).* Maha Sarakham: Mahasarakham University.

Yodkhumbai, N. (2023). The Guidelines of Academic Adminisration for Schools Under Secondary Educational Service Area Office. *Journal of MCU Ubon Review, Vol.8 No.3 (September-December 2023)*, 513-524.